## ຈຳນວນການຊ່ວຍເຫລືອອາຫານ

ການຊ່ວຍເຫລືອປະຈຳເດືອນແມ່ນໄດ້ອີງໃສ່ຈຳນວນຄົນຢູ່ໃນຄອບຄົວຂອງທ່ານ, ລາຍໄດ້ຂອງທ່ານ, ແລະລາຍຈ່າຍຂອງການດຳຣົງຊີວິດ.

ການຊ່ວຍເຫລືອສູງສຸດແມ່ນ:

| ຈຳນວນຄົນຢູ່ໃນຄອບຄົວ | ການຊ່ວຍເຫລືອສູງສຸດ* |
|---|---|
| 1 | $291 |
| 2 | $535 |
| 3 | $766 |
| 4 | $973 |
| 5 | $1,155 |

*ຈຳນວນຖືກດັດແປງໃຫມ່ທຸກໆເດືອນອົກໂຕເບີ

## ທ່ານບໍ່ຕ້ອງເປັນປະຊາຊົນຄົນ U.S. ເພື່ອຈະໄດ້ຮັບການຊ່ວຍເຫລືອອາຫານ

ຄົນເຂົ້າເມືອງມາຕັ້ງຖິ່ນຖານຜູ້ທີ່ສອດຄ່ອງນຳກົດຣະບຽບຂອງໂຄງການອັນເຈາະຈົງພາຍໃຕ້ໂຄງການເຄື່ອງບໍຣິໂພກເພີ້ມເຕີມຂອງຣັດຖະບານກາງຈະມີເງື່ອນໄຂໄດ້ຮັບການຊ່ວຍເຫລືອອາຫານ. **ຖ້າຫາກວ່າທ່ານໄດ້ຮັບການຊ່ວຍເຫລືອອາຫານ,ທ່ານຈະບໍ່ຖືກຖືວ່າເປັນພາລະຂອງສາທາຣະນະຊົນ.**

ຄົນເຂົ້າເມືອງມາຕັ້ງຖິ່ນຖານຜູ້ທີ່ບໍ່ມີເອກສານ, ນັກທ່ອງທ່ຽວ,ແລະຜູ້ທີ່ບໍ່ແມ່ນຄົນເຂົ້າເມືອງມາຕັ້ງຖິ່ນຖານຄົນອື່ນໆຈະບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫລືອອາຫານ.

SM
SNAP
Supplemental
Nutrition
Assistance
Program

## ຂ້າພະເຈົ້າຈະຂໍເອົາໄດ້ຢ່າງໃດ?

ທ່ານຈະຣ້ອງຂໍເອົາໂດຍທາງໂທຣະສັບໄດ້ທີ່ 877-501-2233 ຫລືຕາມຫ້ອງການບໍຣິການຊຸມນຸມຊົນໃກ້ບ້ານທ່ານ.ທ່ານບໍ່ຕ້ອງໄດ້ຂຽນປະກອບໃບຄຳຣ້ອງກ່ອນທີ່ທ່ານຈະມີການສຳພາດເບິ່ງເງື່ອນໄຂຮັບເອົາ.

WASHINGTON CONNECTION
your link to services

ທ່ານຍັງຈະຣ້ອງຂໍເອົາທາງອອນລາຍນ໌ໄດ້ 24/7 ໄດ້ທ **washingtonconnection.org** ຫລືໂດຍທາງໄປສະນີ. ຕິດຕາມມາໂດຍການສຳພາດເບິ່ງເງື່ອນໄຂຮັບເອົາຂອງທ່ານໃຫ້ແລ້ວໄດ້ທີ່ເລກ 877-501-2233 ຫລືໄປຫ້ອງການບໍຣິການຊຸມນຸມຊົນໃກ້ບ້ານທ່ານທີ່ສຸດ.

ແຟກຊ໌: 888-338-7410

ທີ່ຢູ່ໄປສະນີ:

DSHS Customer Service Contact Center
P.O. Box 11699
Tacoma, WA 98411-6699

Washington State
Department of Social & Health Services
*Transforming lives*

DSHS 22-1301 LA (Rev. 4/24) Laotian

ສະຖາບັນແຫ່ງນີ້ເປັນຜູ້ໃຫ້ການບໍຣິການທີ່ໃຫ້ໂອກາດເທົ່າທຽມກັນ.

# ທາງເລືອກເອົາອາຫານທີ່ມີພະລານາມັຍສຳລັບວິຖີທາງການດຳຣົງຊີວິດທີ່ອຸດົມສົມບູນ

# ອາຫານຈຳເປັນ



# SNAP

ເພີ້ມເຕີມ
ເຄື່ອງບໍຣິໂພກ
ການຊ່ວຍເຫລືອ
ໂຄງການ

## ອາຫານຈຳເປັນແມ່ນຫຍັງ?

ອາຫານຈຳເປັນ,ເປັນທີ່ຮູ້ຈັກກັນອີກວ່າເປັນໂຄງການຊ່ວຍເຫລືອເຄື່ອງບໍລິໂພກເພີ້ມເຕີມ ຫລື **SNAP,** ຊ່ວຍເຫລືອຄົນໃຫ້ຊື້ເອົາອາຫານການກິນ.

ຄອບຄົວທີ່ມີເງື່ອນໄຂໄດ້ຮັບຈະໄດ້ຮັບບັດການຊ່ວຍເຫລືອທາງເອເລກໂຕຣນິກ,ຫລືບັດ **EBT,** ທີ່ມີການຊ່ວຍເຫລືອປະຈຳເດືອນເພື່ອຈະຊື້ເອົາອາຫານຢູ່ຕາມຮ້ານຄ້າຂາຍອາຫານການກິນບ່ອນທີ່ເຂົ້າຮ່ວມນຳ.





**ທ່ານຮູ້ຈັກບໍ່?** ທ່ານສາມາດໃຊ້ການຊ່ວຍເຫລືອອາຫານຈຳເປັນ EBT ຢູ່ຕາມຕະລາດຊາວນາ. ທ່ານຍັງສາມາດໃຊ້ການຊ່ວຍເຫລືອເພື່ອຈະຊື້ເອົາພືດຫລືແກ່ນໃນທີ່ຜະລິດອາຫານອອກມາໄດ້ອີກ ຄືກັນ.

## ອາຫານຈຳເປັນສາມາດຊ່ວຍເຫລືອຂ້ອຍນຳການຝຶກຝົນຫລືການຊອກວຽກໄດ້ບໍ່?

- ແມ່ນແລ້ວ! ຖ້າຫາກວ່າທ່ານໄດ້ຮັບອາຫານຈຳເປັນ, ທ່ານສາມາດອາສາສະມັກສຳລັບໂຄງການ Basic Food Employment & Training ໄດ້.
- BFET ເອົາການຊອກວຽກໃຫ້, ການຝຶກຝົນເຣື່ອງການຊອກວຽກ, ການບໍຣິການດ້ານການສຶກສາ, ການຝຶກຝົນວິຊາຊີບ, ແລະ ໂອກາດວຽກງານອື່ນໆໃຫ້ແກ່ບຸກຄົນຜູ້ທີ່ໄດ້ຮັບອາຫານຈຳເປັນ.

ອົງການຫລາຍໆບ່ອນຈະໃຫ້ຄວາມຊ່ວຍເຫລືອນຳການຂົນສົ່ງໄປມາ, ການຝາກລູກ, ຫລື ແຫລ່ງຊ່ວຍເຫລືອອື່ນໆທີ່ສາມາດຊ່ວຍເຫລືອທ່ານໃຫ້ທຳງານໄປສູ່ເປົ້າຫມາຍວິຊາຊີບຂອງທ່ານ. ການບໍຣິການຈະຖືກເອົາໃຫ້ໂດຍຜ່ານໂຮງຮຽນຄອມມີວນິຕີຄອນເຫລດ ຫລື ຄອນ ເຫລດການຊ່າງ ແລະ/ຫລື ອົງການຕັ້ງຢູ່ຕາມຊຸມນຸມຊົນ ແລະ ກວມເອົາພາກສ່ວນວຽກງານແລະ ຂະແນງຂອງວິຊາຊີບກ້ວາງຂວາງຫລາຍຢ່າງ.

## ແມ່ນຫຍັງແດ່ທີ່ຂ້າພະເຈົ້າຄວນຈະຮູ້ຈັກກ່ຽວກັບການຊ່ວຍເຫລືອອາຫານຈຳເປັນ?

| ຂະນາດຄອບຄົວ | ຂອບເຂດຣາຍໄດ້ປະຈຳເດືອນ* |
|---|---|
| 1 | $2,510 |
| 2 | $3,407 |
| 3 | $4,303 |
| 4 | $5,200 |
| 5 | $6,097 |

*ຈຳນວນຖືກດັດແປງໃຫມ່ທຸກໆເດືອນ ເອໂປຣ

ມັນບໍ່ມີຂອບເຂດຊັບສິນບັດຫລືຂອບເຂຊຍອດຣາຍໄດ້ສຳລັບຄົນສ່ວນຫລາຍ.

- ເມື່ອເວລາທ່ານໄດ້ຮັບອາຫານຈຳເປັນ,ທ່ານຈະມີສິດໄດ້ຮັບໂຄງການອື່ນ:
  - ໂຄງການຄາບອາຫານຢູ່ໂຮງຮຽນຟຣີຫລື ລຸດຣາຄາ.
  - ໂຄງການຊ່ວຍເຫລືອເຄື່ອງບໍຣິໂພກພິເສດສຳລັບແມ່, ເດັກທາຣົກ ແລະ ເດັກນ້ອຍຫລື WIC.

ເພື່ອຮາຍລະອຽດເພີ້ມເຕີມຂອງການບໍຣິການຂອງໂຄງການ **BFET,** ເຂົ້າອອນລາຍນ໌ທີ່

**dshs.wa.gov/BFET**